ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 324/ທຫລ
ນະຄອນຫລວງວຽງຈັນ, ວັນທີ 19 APR 2011

# ຂໍ້ຕົກລົງ
# ວ່າດ້ວຍການຈັດຊັ້ນຫນີ້ ແລະ ຫັກເງິນແຮຫນີ້ທີ່ຖືກຈັດຊັ້ນ ຂອງທະນາຄານທຸລະກິດ

- ອີງຕາມກົດຫມາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດຫມາຍວ່າດ້ວຍທະນາຄານທຸລະກິດ ເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄວ້າ ແລະ ສະເຫນີ ຂອງກົມຄຸ້ມຄອງທະນາຄານທຸລະກິດ ເລກທີ 66/ກຄທ, ລົງວັນທີ 11 ເມສາ 2011.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ຫມວດທີ I
## ຂໍ້ກຳນົດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ເງື່ອນໄຂ ກ່ຽວກັບການຈັດຊັ້ນຫນີ້, ການຫັກເງິນແຮ, ການປັບປຸງໂຄງສ້າງຫນີ້, ການລ້າງຫນີ້ ແລະ ເກັບຄືນຫນີ້ສູນ ຂອງທະນາຄານທຸລະກິດ ແນໃສ່ໃຫ້ມີການທົບທວນການຈັດຊັ້ນຫນີ້ຢ່າງຖືກຕ້ອງ, ຮັບປະກັນການຫັກເງິນແຮໃຫ້ຄົບຖ້ວນ ເພື່ອຮອງຮັບຄວາມສ່ຽງທີ່ອາດຈະເກີດຈາກຫນີ້ຕ້ອງຮັບທວງຍາກ ແລະ ຮັກສາຄວາມຫມັ້ນຄົງ ໃຫ້ແກ່ທະນາຄານທຸລະກິດທົ່ວລະບົບ.